# Community Profile

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG | HELVETAS LAOS

Government of Japan | JSDF Japan Social Development Fund | THE WORLD BANK IBRD • IDA | WORLD BANK GROUP | Schweizerische Eidgenossenschaft, Confédération suisse, Confederazione Svizzera, Confederaziun svizra, Swiss Agency for Development and Cooperation SDC

## ໂຄງການ ການໃຫ້ຂໍ້ມູນສາທາລະນະ ແລະ ການໃຫ້ຄວາມຮູ້ແກ່ຊຸມຊົນ ທີ່ມີຄວາມບອບບາງ ໃນ ສປປ ລາວ (PIASVC) ທີ່ບ້ານທ່າ, ເມືອງ ຄຳ, ແຂວງ ຊຽງຂວາງ

### ສະຖິຕິຂອງບ້ານ




### ຂໍ້ມູນໂດຍລວມຂອງບ້ານ

- ເນື້ອທີ່ທັງໝົດ 2761 ເຮັກຕາ
- ຕັ້ງຢູ່ກຸ່ມລອງຄາວ ເຊິ່ງຫ່າງຈາກເທດສະບານເມືອງຄຳ ປະມານ 18 ກິໂລແມັດ
- ອາຊີບຂອງປະຊາຊົນ ແມ່ນເຮັດສວນຄົວ, ລ້ຽງສັດ, ການບໍລິການ ແລະ ຫັດຖະກຳ
- ມີເນື້ອທີ່ນາ 56 ເຮັກຕາ ເຊິ່ງຜົນຜະລິດ 168 ໂຕນ, ແລະ ລ້ຽງງົວຄວາຍ ຫຼາຍກວ່າ 119 ໂຕ
- ມີສະມາຊິກໄກ່ເກ່ຍຂັ້ນບ້ານ 5 ທ່ານ

### ຊະນິດຂອງດິນ



ດິນປູກຝັງ | ດິນກະສິກຳ | ດິນປຸກສ້າງ | ດິນປ່າໄມ້











"ສະມາຄົມ CASE ກໍເປັນໜຶ່ງສະມາຄົມທີ່ໃຫ້ການຝຶກອົບຮົບການສ້າງຄວາມຮັບຮູ້, ຄວາມເຂົ້າໃຈໃຫ້ອາສາສະໝັກຂັ້ນບ້ານ ໃນໜ້າວຽກການເຮັດກິດຈະກຳ ການລົງທຶນກະສິກຳແບບມີຄວາມຮັບຜິດຊອບ, ສັນຍາກະສິກຳ, ການໃຫ້ຄຳປຶກສາທາງດ້ານກົດໝາຍ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ບ້ານເປົ້າໝາຍ ແລະ ໃຫ້ປະຊາຊົນສາມາດນຳໃຊ້ທີ່ດິນໃຫ້ເກີດຜົນໃຫ້ຫຼາຍທີ່ສຸດ"

## ພາບໂດຍລວມຂອງໂຄງການ

ສະມາຄົມ CASE ໄດ້ຈັດການຝຶກອົບຮົມໃຫ້ 10 ກຸ່ມບ້ານເປົ້າໝາຍພາຍໃຕ້ໂຄງການ PIASVC ທີ່ເມືອງ ຄຳ, ເຊິ່ງໄດ້ຊ່ວຍຄວາມອາດສາມາດ ແລະ ຄວາມເຂົ້າໃຈຕໍ່ກັບກົດໝາຍທີ່ດິນໃຫ້ປະຊາຊົນໃນພື້ນທີ່ດັ່ງກ່າວ, ໂດຍສະເພາະແມ່ນກຸ່ມອາສາສະໝັກບ້ານ ແລະ ໜ່ວຍໄກ່ເກ່ຍຂັ້ນບ້ານ. ພວກເຮົາໃຫ້ປະຕິຍານວ່າ ການແບ່ງປັນຄວາມຮູ້ ແລະ ການຝຶກອົບຮົມໃນຄັ້ງນີ້ແມ່ນຈະຊ່ວຍຫຼຸດຜ່ອນຂໍ້ຂັດແຍ່ງກ່ຽວກັບທີ່ດິນລະຫວ່າງຊຸມຊົນໃນທີ່ສຸດ. ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການເຫຼົ່ານີ້ໄດ້ກ່າວຄຳຄິດເຫັນຕໍ່ກັບໂຄງການວ່າ:



**ກຸ່ມອາສາສະໝັກຂັ້ນບ້ານ**

"ພວກເຮົາແມ່ນຮູ້ສຶກດີໃຈ ແລະ ໄດ້ຮຽນຮູ້ຫຼາຍຢ່າງກັບໂຄງການດັ່ງກ່າວ, ໂດຍສະເພາະແມ່ນເຮັດໃຫ້ເຂົ້າໃຈເຖິງການນຳໃຊ້ທີ່ດິນໃນແຕ່ລະປະເພດ ເປັນຕົ້ນແມ່ນການນຳໃຊ້ທີ່ດິນຕາມປະເພນີ ໂດຍສ່ວນຕົວແລ້ວ ຂ້າພະເຈົ້າ ຄິດວ່າເປັນໂຄງການທີ່ມີປະໂຫຍດຫຼາຍ. ນອກນັ້ນ ຂ້າພະເຈົ້າເອງຍັງສາມາດເຜີຍແຜ່ຄວາມຮູ້ທີ່ຮຽນມາໃຫ້ຊາວບ້ານຄົນອື່ນໆໃຫ້ເຂົ້າໃຈຮ່ວມກັນ, ໃນອະນາຄົດ ຖ້າເປັນໄປໄດ້ ພວກເຮົາຢາກໃຫ້ໂຄງການໄດ້ຊ່ວຍເຜີຍແຜ່ວິທີການໃນການແລ່ນເອກະສານໃບຕາດິນໃຫ້ພວກເຮົາຈະແຈ້ງຂຶ້ນ ເພາະໃບຕາດິນຈະເຮັດໃຫ້ສະຖານະສິດຄອບຄອງທີ່ດິນຂອງພວກເຮົາໝັ້ນຄົງ."

"ໃນຄວາມຄິດສ່ວນຕົວຂອງຂ້າພະເຈົ້າ, ຫຼັງຈາກເຮົາຈັດຕັ້ງປະຕິບັດໂຄງການໃນພື້ນທີ່ເປົ້າໝາຍແລ້ວ ພວກເຮົາຢາກເຫັນການປ່ຽນແປງຊີວິດການເປັນຢູ່ຂອງເຂົາເຈົ້າດີຂຶ້ນ ໂດຍສະເພາະຖ້າປະຊາຊົນໄດ້ຮັບຮູ້ ແລະ ເຂົ້າເຖິງກົດໝາຍທີ່ດິນ ແລະ ຊັບພະຍາກອນທຳມະຊາດທີ່ຖືກຕ້ອງ ຈະນຳໄປສູ່ການຫຼຸດຜ່ອນຂໍ້ຂັດແຍ່ງທັງພາຍໃນ ແລະ ພາຍນອກ. ການຖາງປ່າເຮັດໄຮ່ທີ່ພວກເຮົາມັກພົບເຫັນໃນເຂດນອກ ເຊິ່ງເປັນອີກໜຶ່ງປັດໄຈເຮັດໃຫ້ປະຊາຊົນພາຍໃນບ້ານ ປະເຊີນພາວະມົນລະພິດ, ຂາດແຄນຊັບພະຍາກອນທີ່ສາມາດທຳມາຫາກິນ ບັນຫາດັ່ງກ່າວກໍອາດຈະນັບມື້ນັບໄດ້ຮັບການແກ້ໄຂຫຼາຍຂຶ້ນ, ໃນອະນາຄົດ ຂ້າພະເຈົ້າຢາກເຫັນການປ່ຽນແປງຂອງປະຊາຊົນເລື່ອງສິດໃນການນຳໃຊ້ມີ່ດິນ ໂດຍເຫັນຄວາມສຳຄັນຂອງບົດບາດຍິງ-ຊາຍໃນການນຳໃຊ້ສິດກ່ຽວກັບທີ່ດິນຮ່ວມກັນຫຼາຍຂຶ້ນ."



**ເລ້ ທະວີໄຊ**

ພະນັກງານອົງການຈັດຕັ້ງທາງສັງຄົມ



**ຄຳພາດ ພົມມະຈັນ**

ພະນັກງານ ຫ້ອງການຍຸດຕິທຳ ປະຈຳເມືອງຄຳ, ແຂວງ ຊຽງຂວາງ

"ຂ້າພະເຈົ້າເຫັນວ່າ ກ່ອນໂຄງການຈະເຂົ້າມາຈັດຕັ້ງປະຕິບັດ ຊາວບ້ານສ່ວນໃຫຍ່ຍັງນຳໃຊ້ດິນໃນຮູບແບບຕາມປະເພນີ ແລະ ຍັງມີຂໍ້ຂັດແຍ່ງກ່ຽວກັບທີ່ດິນ, ຫຼັງຈາກພວກເຮົາ ແລະ ໂຄງການໄດ້ຊ່ວຍເຜີຍແຜ່ທາງດ້ານກົດໝາຍ, ໄດ້ຊ່ວຍຝຶກອົບຮົບໃຫ້ກັບຊາວບ້ານ ເຫັນວ່າມີຜົນດີຫຼາຍຂຶ້ນ ແລະ ເຮັດໃຫ້ປະຊາຊົນສາມາດຫາງທາງອອກຮ່ວມກັນໄດ້ພາຍໃຕ້ຂອງກົດໝາຍທີ່ດິນ. ຂ້າພະເຈົ້າ ໃນນາມພະນັກງານຈາກອົງການຈັດຕັ້ງລັດ ຢາກຂອບໃຈໂຄງການດັ່ງກ່າວທີ່ຊ່ວຍໃຫ້ພະນັກງານລັດຂອງພວກເຮົາປະຢັດງົບປະມານ ແລະ ປະຢັດເວລາໃນການນຳໃຊ້ອຸປະກອນເຄື່ອງມືເຜີຍແຜ່ກົດໝາຍທີ່ດິນ. ອຸປະກອນການເຜີຍແຜ່ກົດໝາຍ ແລະ ເຕັກນິກຂອງຄູຝຶກຂອງໂຄງການ ເປັນສິ່ງທີ່ຂ້າພະເຈົ້າປະທັບໃຈຫຼາຍ ເພາະເປັນຮູບແບບໃຫ້ປະຊາຊົນໄດ້ເຫັນພາບ ແລະ ເຂົ້າໃຈງ່າຍເຖິງຂະບວນການ ຂອງກົດໝາຍຜ່ານໂພສເຕີ ແລະ ວີດີໂອ. "